ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3143/ກງ

ນະຄອນຫຼວງວຽງຈັນ, ວັນທີ 4 ຕຸລາ 2018

# ຄຳແນະນຳ
# ກ່ຽວກັບ ການຈັດຕັ້ງປະຕິບັດ ການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ພະນັກງານ-ລັດຖະກອນ ຜ່ານລະບົບທະນາຄານ

- ອີງຕາມ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ຄຳສັ່ງ ວ່າດ້ວຍ ມາດຕະການ ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ລາຍຈ່າຍ ເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ປີ 2017 ສະບັບເລກທີ 55/ນຍ, ລົງວັນທີ 30 ທັນວາ 2016;
- ອີງຕາມ ຄຳແນະນຳກ່ຽວກັບການກວດຜ່ານບັນຊີຈຳນວນພົນ ຂອງພະນັກງານ-ລັດຖະກອນ ສະບັບເລກທີ 07/ພນ ລົງວັນທີ 02 ສິງຫາ 2016.

**ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ :**

## I. ຈຸດປະສົງ

ຄຳແນະນຳສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ຄວາມຮັບຜິດຊອບ ກ່ຽວກັບ ການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍໃຫ້ແກ່ພະນັກງານ-ລັດຖະກອນ ຜ່ານລະບົບທະນາຄານ; ຮັບປະກັນຄວາມເປັນເອກະພາບ, ມີປະສິດທິພາບ, ປະສິດທິຜົນ, ໂປ່ງໃສ, ວ່ອງໄວ ແລະ ທັນຕາມກຳນົດເວລາ ໃນຂອບເຂດທົ່ວປະເທດ.

## II. ເປົ້າໝາຍການນຳໃຊ້

ບັນດາຫົວໜ່ວຍງົບປະມານ ຂັ້ນ ສູນກາງ ແລະ ທ້ອງຖິ່ນ, ກົມງົບປະມານແຫ່ງລັດ/ຂະແໜງງົບປະມານແຫ່ງລັດຂັ້ນທ້ອງຖິ່ນ, ຄັງເງິນແຫ່ງຊາດ/ຄັງເງິນແຫ່ງຊາດປະຈຳທ້ອງຖິ່ນ, ກະຊວງພາຍໃນ/ຂະແໜງພາຍໃນຂັ້ນທ້ອງຖິ່ນ, ທະນາຄານທຸລະກິດຂອງລັດ ແລະ ທະນາຄານທຸລະກິດ ຜູ້ໃຫ້ບໍລິການ.

## III. ຫຼັກການລວມ

ການຈັດຕັ້ງປະຕິບັດ ການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້ :

- ຮັບປະກັນ ການກວດກາ, ການປະກອບເອກະສານ, ການຄຸ້ມຄອງ ການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ພະນັກງານ-ລັດຖະກອນ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລະ ທັນຕາມກຳນົດເວລາທີ່ໄດ້ກຳນົດໄວ້;
- ມີຄວາມ ໂປ່ງໃສ, ວ່ອງໄວ, ຖືກຕ້ອງ ແລະ ສາມາດກວດສອບໄດ້;

## IV. ຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດການເບີກຈ່າຍ ເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ

1. ບັນດາຫົວໜ່ວຍງົບປະມານ ຂັ້ນສູນກາງ ແລະ ທ້ອງຖິ່ນ ປະກອບເອກະສານ ດັ່ງນີ້ :

- ບັນຊີຈຳນວນພົນ, ຊັ້ນ-ຂັ້ນ ເງິນເດືອນ ແລະ ການອຸດໜູນຕ່າງໆ ຂອງພະນັກງານ-ລັດຖະກອນ ສົ່ງເຖິງກະຊວງພາຍໃນ/ຂະແໜງພາຍໃນຂັ້ນທ້ອງຖິ່ນ ຂອງງວດຕໍ່ໄປ <u>ບໍ່ໃຫ້ກາຍວັນທີ 15</u> ຂອງເດືອນສຸດທ້າຍໃນແຕ່ລະງວດ;
- ເອກະສານລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ສົ່ງເຖິງກົມງົບປະມານແຫ່ງລັດ/ຂະແໜງງົບປະມານແຫ່ງລັດ ຂັ້ນທ້ອງຖິ່ນ ເພື່ອຄົ້ນຄວ້າອະນຸມັດລາຍຈ່າຍ ຂອງງວດຕໍ່ໄປ <u>ບໍ່ໃຫ້ກາຍວັນທີ 30</u> ຂອງເດືອນສຸດທ້າຍໃນແຕ່ລະງວດ;
- ໃບຖອນເງິນ ສົ່ງເຖິງຄັງເງິນແຫ່ງຊາດ/ຄັງເງິນແຫ່ງຊາດປະຈຳທ້ອງຖິ່ນ ເພື່ອກວດກາຄວາມຖືກຕ້ອງ <u>ບໍ່ໃຫ້ກາຍວັນທີ 15</u> ຂອງແຕ່ລະເດືອນ.

2. ກະຊວງພາຍໃນ/ຂະແໜງພາຍໃນ ຂັ້ນທ້ອງຖິ່ນ

ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ເອກະສານບັນຊີຈຳນວນພົນ ຊັ້ນ-ຂັ້ນ ເງິນເດືອນ ແລະ ການອຸດໜູນຕ່າງໆ ຂອງບັນດາຫົວໜ່ວຍງົບປະມານ ເປັນແຕ່ລະງວດ ດັ່ງນີ້ :

- ງວດ 1 (ເດືອນ 1,2,3) ເລີ່ມແຕ່ວັນທີ 16-20 ທັນວາ;
- ງວດ 2 (ເດືອນ 4,5,6) ເລີ່ມແຕ່ວັນທີ 16-20 ມີນາ;
- ງວດ 3 (ເດືອນ 7,8,9) ເລີ່ມແຕ່ວັນທີ 16-20 ມິຖຸນາ;
- ງວດ 4 (ເດືອນ 10,11,12) ເລີ່ມແຕ່ວັນທີ 16-20 ກັນຍາ.

3. ກົມງົບປະມານແຫ່ງລັດ/ຂະແໜງງົບປະມານແຫ່ງລັດ ຂັ້ນທ້ອງຖິ່ນ

ກວດກາ ແລະ ອະນຸມັດລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໃຫ້ບັນດາຫົວໜ່ວຍງົບປະມານ <u>ບໍ່ໃຫ້ກາຍວັນທີ 10</u> ຂອງເດືອນທຳອິດໃນງວດທີ່ປະຕິບັດລາຍຈ່າຍ.

4. ຄັງເງິນແຫ່ງຊາດ/ຄັງເງິນແຫ່ງຊາດ ປະຈຳທ້ອງຖິ່ນ

- ກວດກາ ເອກະສານລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ຂອງບັນດາຫົວໜ່ວຍງົບປະມານ ບໍ່ໃຫ້ກາຍວັນທີ 23 ຂອງແຕ່ລະເດືອນ;
- ນຳສົ່ງເອກະສານລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໄປຈ່າຍຢູ່ທະນາຄານ ເປັນແຕ່ລະວັນ ເຊິ່ງເລີ່ມແຕ່ ວັນທີ 24 ເຖິງ ວັນທີ 30 ຂອງແຕ່ລະເດືອນ.

5. ທະນາຄານຜູ້ໃຫ້ບໍລິການ

- ຮັບເອກະສານລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ຈາກຄັງເງິນແຫ່ງຊາດ ແລະ ກວດກາຄວາມຖືກຕ້ອງຂອງຈຳນວນເງິນຢູ່ໃນໃບຖອນເງິນ ທຽບກັບຈຳນວນເງິນຢູ່ໃນຕາຕະລາງບັນຊີເງິນຝາກຂອງພະນັກງານ-ລັດຖະກອນ ຜູ້ທີ່ຮັບເງິນເດືອນຕົວຈິງ ໃຫ້ກົງກັນ;
- ທະນາຄານຕັດບັນຊີເງິນຝາກງົບປະມານຂອງ ຄັງເງິນແຫ່ງຊາດ/ຄັງເງິນແຫ່ງຊາດ ປະຈຳທ້ອງຖິ່ນ ແລະ ໂອນເຂົ້າບັນຊີເງິນຝາກເງິນເດືອນ ຂອງພະນັກງານ-ລັດຖະກອນ ໃນລະຫວ່າງ ວັນທີ 25 ຫາ ວັນທີ 30 ໃຫ້ເປັນເອກະພາບກັນທຸກຫົວໜ່ວຍງົບປະມານໃນແຕ່ລະເດືອນ.

ໃນກໍລະນີ ທະນາຄານໄດ້ຮັບໃບຖອນເງິນຈາກຄັງເງິນແຫ່ງຊາດ ຫຼັງວັນທີ 30 ຂອງເດືອນ ແມ່ນໃຫ້ປະຕິບັດການໂອນເງິນເຂົ້າບັນຊີເງິນຝາກເງິນເດືອນຂອງພະນັກງານ-ລັດຖະກອນ ຕາມມື້ທີ່ໄດ້ຮັບເອກະສານ.

## V. ການຈັດຕັ້ງປະຕິບັດ

1. ໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ເດືອນ ມັງກອນ 2019 ເປັນຕົ້ນໄປ ໂດຍແບ່ງອອກເປັນ 2 ໄລຍະຄື : ໄລຍະທີ 1 ປະຕິບັດຢູ່ບັນດາຫົວໜ່ວຍງົບປະມານອ້ອມຂ້າງສູນກາງ ( ກຳນົດເວລາບໍ່ໃຫ້ເກີນ 06 ເດືອນ ); ຫຼັງຈາກນັ້ນ ໃຫ້ປະເມີນຜົນ, ຖອດຖອນບົດຮຽນ ແລະ ປັບປຸງຂໍ້ຄົງຄ້າງ; ໄລຍະທີ 2 ຈຶ່ງຜັນຂະຫຍາຍ ໄປຈັດຕັ້ງປະຕິບັດຢູ່ບັນດາຫົວໜ່ວຍງົບປະມານ ຂັ້ນທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
2. ໃນກໍລະນີພົບຄວາມຫຍຸ້ງຫຍາກໃນການຈັດຕັ້ງປະຕິບັດ ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງປະສານສົມທົບກັນ ເພື່ອພ້ອມກັນແກ້ໄຂໃຫ້ທັນກັບເວລາ ແລະ ທັງລາຍງານໃຫ້ຂັ້ນເທິງຂອງຕົນຮັບຊາບ;
3. ການຈັດຕັ້ງປະຕິບັດໃນໄລຍະເບື້ອງຕົ້ນ ແມ່ນຍັງບໍ່ທັນໄດ້ລວມເອົາ ກຳລັງປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ;
3. ມອບໃຫ້ຄັງເງິນແຫ່ງຊາດ, ກົມງົບປະມານແຫ່ງລັດ ກະຊວງການເງິນ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງເຜີຍແຜ່, ແນະນຳ ໃຫ້ບັນດາຫົວໜ່ວຍງົບປະມານ ໃຫ້ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດ ຕາມລະດັບຄາດໝາຍ;
4. ຄຳແນະນຳສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສົມດີ ດວງດີ